ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

--------------------------------------------------

# ບົດສະຫຼຸບປະຈຳເດືອນ

*ກ່ຽວກັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ*

*ກໍລະກົດ 2015*

**ຄະນະຮັບຜິດຊອບ ທລຍ ສູນກາງ**

*ກະກຽມໂດຍ:* ໜ່ວຍງານຕິດຕາມປະເມີນຜົນ

7 ສິງຫາ 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ
**ກອງທຶນຫຼຸດຜ່ອນຄວາມທຸກຍາກ**

0766
ເລກທີ........../ທລຍ
11 AUG 2015

## ບົດສະຫຼຸບປະຈຳເດືອນ
## ກໍລະກົດ ແລະ ແຜນວຽກ ເດືອນ ສິງຫາ 2015

ວຽກງານທີ່ພົ້ນເດັ່ນສຳລັບເດືອນ ກໍລະກົດ 2015 ແມ່ນ ໄດ້ມີການສະຫຼຸບສັງລວມ ຜົນໄດ້ຮັບຂອງ ທລຍ 2 ເພື່ອລາຍງານໃຫ້ແກ່ລັດຖະບານເຊິ່ງມີລາຍລະອຽດດັ່ງນີ້:

ໂຄງການກອງທຶນຫລຸດຜ່ອນທຸກຍາກ ໄລຍະ 2 (ທລຍ 2) ໄດ້ຮັບທຶນຊ່ວຍເຫລືອທັງໝົດຈຳນວນ 65,700,000 ໂດລາສະຫະລັດ ເຊິ່ງເປັນທຶນຈາກລັດຖະບານແຫ່ງ ສປປ.ລາວ ຈຳນວນ 10 ລ້ານ, ຈາກທະນາຄານໂລກ 25 ລ້ານ, ຈາກອົງການເພື່ອການພັດທະນາ ແລະ ການຮ່ວມມື ແຫ່ງປະເທດສະວິດຊີແລນ 13.2 ລ້ານ ແລະ ຈາກກອງທຶນສາກົນເພື່ອຫຼຸດຜ່ອນຄວາມທຸກຍາກຂອງອອດສະຕາລີ 17.5 ລ້ານໂດລາສະຫະລັດ. ທຶນທັງໝົດແມ່ນຖືກນຳໃຊ້ ສຳລັບ 5 ປີ (2011-2016) ໃນນັ້ນ, 72% ແມ່ນໃຊ້ເພື່ອການລົງທຶນສາລັບກໍ່ສ້າງພື້ນຖານໂຄງລ່າງ ແລະ 28% ເພື່ອຄ່າໃຊ້ຈ່າຍດ້ານບໍລິຫານລວມທັງການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ ອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ. ຕະຫຼອດໄລຍະເວລາທີ່ໄດ້ຈັດຕັ້ງປະຕິບັດໂຄງການ ທລຍ 2 ແຕ່ກາງປີ 2011 ຫາກາງປີ 2015, ມີຈຳນວນທັງໝົດ 1,426 ໂຄງການທີ່ໄດ້ຮັບອະນຸມັດໃນການຈັດຕັ້ງປະຕິບັດ ແລະ ຄາດວ່າຈະໄດ້ນຳໃຊ້ງົບປະມານ ທັງໝົດ 294 ຕື້ ກີບ. ມີຈຳນວນຫຼາຍກວ່າ 1,300 ບ້ານທີ່ໄດ້ຮັບຜົນປະໂຫຍດໂດຍກົງ ແລະ ກວມເອົາປະຊາກອນຫຼາຍກວ່າ 683,797 ຄົນ, ໃນນັ້ນເປັນເພດຍິງກວມເອົາເຄິ່ງໜຶ່ງ ແລະ ຊົນເຜົ່າສ່ວນນ້ອຍກວມເອົາຫຼາຍກວ່າ 60% ຂອງຜູ້ໄດ້ຮັບຜົນປະໂຫຍດທັງໝົດ.

ສຳລັບຜົນໄດ້ຮັບທີ່ພົ້ນເດັ່ນກ່ຽວກັບປະເພດໂຄງການທີ່ ທລຍ ໄດ້ຊ່ວຍເຫຼືອແມ່ນສາມາດສັງລວມໄດ້ຄື: ກໍ່ ສ້າງ ແລະ ປັບປຸງເສັ້ນທາງຊົນນະບົດທັງໝົດ 225 ເສັ້ນທາງ (ຍາວທັງໝົດ 1,228 ກິໂລແມັດ), ກໍ່ສ້າງ ແລະ ສ້ອມ ແປງຂົວທັງໝົດ 45 ໂຄງການ, ຈັດສັນຜັງບ້ານ ແລະ ວາງທໍ່ລອດທາງທັງໝົດ 18 ໂຄງການ, ສະໜອງຕາຄ່າຍໄຟຟ້າຂະໜາດນ້ອຍ 18 ແຫ່ງ, ກໍ່ສ້າງ ແລະ ສ້ອມແປງໂຮງຮຽນທັງໝົດ 386 ແຫ່ງ (ເປັນຈຳນວນທັງໝົດ 955 ຫ້ອງ), ກໍ່ສ້າງ ແລະ ສ້ອມແປງສຸກສາລາ 33 ແຫ່ງ, ກໍ່ສ້າງ ແລະ ສ້ອມແປງລະບົບນ້ຳທັງໝົດ 711 ໂຄງການ, ກໍ່ສ້າງ ແລະ ສ້ອມແປງສິ່ງອຳນວຍສະດວກດ້ານກະສິກຳເຊັ່ນ ຊົນລະປະທານ ແລະ ຝາຍກັ້ນນ້ຳທັງໝົດ 63 ໂຄງການ ແລະ ຕະຫຼາດຊຸມຊົນທັງໝົດ 10 ແຫ່ງ. ພ້ອມດຽວກັນນັ້ນ ທລຍ ໄດ້ໃຫ້ການສະໜັບສະໜູນວຽກງານວຽກງານປັບປຸງຊີວິດການເປັນຢູ່ເພື່ອຄ້ຳປະກັນດ້ານໂພສະນາການ ເຊິ່ງໄດ້ທົດລອງຈັດຕັ້ງປະຕິບັດຢູ່ 4 ເມືອງ ໃນສອງແຂວງ ຄື: ເມືອງຊ່ອນ ແລະ ເມືອງຮ້ຽມ ແຂວງຫົວພັນ, ເມືອງນອງ ແລະ ເຊໂປນ ແຂວງສະຫວັນນະເຂດ. ໄດ້ສ້າງຕັ້ງກຸ່ມຊ່ວຍເຫລືອເຊິ່ງກັນ ແລະ ກັນ ຈຳນວນ 306 ກຸ່ມ ກວມເອົາ 85 ບ້ານ ແລະ ມີສະມາຊິກທັງໝົດ

4,406 ຄົນ ເປັນເພດຍິງ 3,220 ຄົນ ມີຈານວນເງິນທຶນໝູນວຽນທັງໝົດ 5,024 ລ້ານກີບ. ໄປຄຽງຄູ່ກັບຜົນສຳເລັດດັ່ງກ່າວ ທລຍ ແມ່ນສາມາດ ບັນລຸຄາດໝາຍສູ້ຊົນ ໃນຂົນຂວາຍໃຫ້ແມ່ຍິງ ແລະ ຊົນເຜົ່າສ່ວນນ້ອຍ ມີສ່ວນຮ່ວມໃນການຕັດສິນໃຈວາງແຜນການພັດທະນາທ້ອງຖິ່ນຂອງເຂົາເຈົ້າເອງ.

ອີກວຽກງານນຶ່ງທີ່ພົ້ນເດັ່ນແມ່ນການເຂົ້າຮ່ວມກອງປະຊຸມ ແລກປ່ຽນບົດຮຽນ ທາງດ້ານການພັດທະນາສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ ອາຊຽນ-ຈີນ ຄັ້ງທີ 9 ຄັ້ງວັນທີ 28-31 ກໍລະກົດ 2015, ນະຄອນຫຼວງວຽງຈັນ. ການເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຖືວ່າມີຄວາມສຳຄັນຫຼາຍ ໃນການຖອດຖອນ ບົດຮຽນຈາກລະດັບພາກພື້ນ ເຊິ່ງສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ທລຍ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.

## 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 1.1 *<u>ຮອບວຽນ 12 (ສົກປີ 2014-2015)</u>*

ສຳລັບຮອບວຽນ 12 (ສົກປີ 2014-2015) ມີຈຳນວນທັງໝົດ 438 ໂຄງການຍ່ອຍ ແລະ ຄາດຄະເນງົບປະມານ 86,960,002,000 ກີບ ໃນນັ້ນຈຳນວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າປະມານ 16 ຕື້ກີບ ທີ່ໄດ້ຜ່ານການປະມູນແລ້ວ. ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 229 ໂຄງການ, ມີ ຄວາມຄືບໜ້າຫລາຍກວ່າ 50% ມີ 121 ໂຄງການ, ໜ້ອຍກວ່າ 50% ມີ 47 ໂຄງການ ສ່ວນທີ່ເຫລືອ 41 ໂຄງການແມ່ນກຳລັງກະກຽມເພື່ອຈັດຕັ້ງປະຕິບັດ ດັ່ງລາຍລະອຽດຕາມຕາຕະລາງລຸ່ມນີ້:

ຕາຕະລາງ 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 59 | 43 | 5 | 5 | 6 |
| ສາລະວັນ | 31 | 3 | 14 | 10 | 4 |
| ຊຽງຂວາງ | 42 | 32 | 7 | 3 | 0 |
| ຜົ້ງສາລີ | 25 | 4 | 13 | 5 | 3 |
| ຫລວງນ້ຳທາ | 21 | 10 | 8 | 1 | 2 |
| ຫົວພັນ | 124 | 89 | 35 | 0 | 0 |
| ຫຼວງພະບາງ | 48 | 13 | 14 | 6 | 15 |
| ອຸດົມໄຊ | 50 | 22 | 18 | 5 | 5 |
| ອັດຕະປື | 18 | 12 | 3 | 3 | 0 |
| ເຊກອງ | 20 | 1 | 4 | 9 | 6 |
| **ລວມ** | **438** | **229** | **121** | **47** | **41** |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ກໍລະກົດ 2015*

### 1.2. <u>ຮອບວຽນ 11 (ສົກປີ 2013-2014)</u>

ໃນສົກປີ 2013 - 2014 (ຮອບວຽນ 11) ທລຍ ໄດ້ຈັດຕັ້ງປະຕິບັດວຽກງານຢູ່ 10 ແຂວງ, 42 ເມືອງ, 278 ກຸ່ມບ້ານ ແລະ ກວມເອົາ 1,951 ບ້ານ, ໃນຮອບວຽນດັ່ງກ່າວ ທລຍ ໄດ້ໃຫ້ການສະໜັບສະໜູນຈຳນວນ

333 ໂຄງການ ແລະ ໃຊ້ງົບປະມານທັງໝົດປະມານ 77,447,719,567 ກີບ, ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ກໍລະກົດ 2015 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການ, 326 ໂຄງການ (97.89%) ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ 100%, ສຳລັບໂຄງການທີ່ມີຄວາມຄືບໜ້າຫລາຍກວ່າ 50% ແມ່ນມີຈຳນວນ 6 ໂຄງການ ແລະ ຄາດວ່າຈະສຳເລັດໃນມໍ່ໆ ນີ້. ອີງຕາມຕາຕະລາງຂ້າງລຸ່ມນີ້ ເຫັນວ່າທຸກໂຄງການ ໃນຮອບວຽນດັ່ງກ່າວ ແມ່ນໄດ້ເລີ່ມຈັດຕັ້ງປະຕິບັດທັງໝົດດັ່ງລາຍລະອຽດຕາມຕາຕະລາງ 2 ແລະ 3.

**ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 11**

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 45 | 45 | 0 | 0 | 0 |
| ສາລະວັນ | 16 | 16 | 0 | 0 | 0 |
| ຊຽງຂວາງ | 29 | 29 | 0 | 0 | 0 |
| ຜົ້ງສາລີ | 23 | 23 | 0 | 0 | 0 |
| ຫຼວງນ້ຳທາ | 16 | 14 | 2 | 0 | 0 |
| ຫົວພັນ | 69 | 69 | 0 | 0 | 0 |
| ຫຼວງພະບາງ | 43 | 42 | 1 | 0 | 0 |
| ອຸດົມໄຊ | 54 | 54 | 0 | 0 | 0 |
| ອັດຕະປື | 18 | 15 | 2 | 1 | 0 |
| ເຊກອງ | 20 | 19 | 1 | 0 | 0 |
| **ລວມ** | **333** | **326** | **6** | **1** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 31 ກໍລະກົດ 2015*

ຈາກຕາຕະລາງຂ້າງເທິງນີ້ 7 ໂຄງການທີ່ບໍ່ທັນສາເລັດ ແລະ ກາລັງຈັດຕັ້ງປະຕິບັດຢູ່ ເຊິ່ງມີລາຍລະອຽດ ແລະ ຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 3 ໂຄງການທີ່ຫລ້າຊ້າໃນຮອບວຽນ 11**

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 11 | ກໍ່ສ້າງຕະຫລາດຊຸມຊົນ | ແຂວງ ອັດຕະປື | ພູວົງ | ວົງສຳພັນ | ຄຳວົງສາ | 77 |
| 11 | ກໍ່ສ້າງລະບົບນ້ຳລິນ | ແຂວງ ເຊກອງ | ລະມາມ | ປາກປຸນ | ປາກກະຢອງ | 95 |
| 11 | ສ້ອມແປງລະບົບນ້ຳລິນ | ແຂວງ ຫຼວງພະບາງ | ໂພນໄຊ | ກຸ່ມ ບ້ານນ້ຳບໍ່ | ຫ້ວຍມັນ | 70 |
| 11 | ກໍ່ສ້າງສຸກສາລາ | ແຂວງ ອັດຕະປື | ພູວົງ | ສີມບູນ | ພູຍາງ | 80 |
| 11 | ກໍ່ສ້າງໃໝ່ ໂຮງຮຽນປະຖົມ | ແຂວງ ອັດຕະປື | ສະໜາມໄຊ | ໜອງຫີນ | ມັດກາ | 15 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ນາແລ | ພູຫຼວງ | ພູຫຼວງມົກຈິງ | 58 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ລອງ | ບອກບໍ່ (ຈ່າໃໝ່ ) | ແສນຈຸມປ(ຈ່າປີ) | 65 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ຫລຍ, 31 ກໍລະກົດ 2015*

ຕາຕະລາງ 4. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 11 (ແຍກຕາມຂະແໜງການ)

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 38 | 37 | 1 | 0 | 0 |
| ຄົມມະນາຄົມ | 57 | 55 | 2 | 0 | 0 |
| ສາທາລະນະສຸກ | 23 | 22 | 1 | 0 | 0 |
| ສຶກສາ | 119 | 118 | 0 | 1 | 0 |
| ນ້ຳສະອາດແລະສຸຂະອະນາໄມ | 90 | 88 | 2 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 6 | 6 | 0 | 0 | 0 |
| ລວມ | **333** | **326** | **6** | **1** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ກໍລະກົດ 2015*

### 1.3. ຮອບວຽນ 9 ແລະ ຮອບວຽນ 10 (ສົກປີ 2012-2013 ແລະ ສົກປີ 2013-2014)

ໃນຮອບວຽນທີ 9 ທລຍ ໄດ້ໃຫ້ການສະໜັບສະໜູນຈຳນວນທັງໝົດ 262 ໂຄງການ ຢູ່ 7 ແຂວງເປົ້າໝາຍ (ອັດຕະປື, ເຊກອງ, ສາລະວັນ, ສະຫວັນນະເຂດ, ຫົວພັນ, ຊຽງຂວາງ ແລະ ຫລວງນ້ຳທາ) ແລະ ນຳໃຊ້ງົບປະມານທັງໝົດ 61,114,300,917 ກີບ ມີຈຳນວນ 261 ໂຄງການເທົ່ານັ້ນທີ່ໄດ້ຈັດຕັ້ງປະຕິບັດສຳເລັດ 100 % ແລະ ງົບປະມານທີ່ໄດ້ນຳໃຊ້ 60,963,457,903 ກີບ ຫລື 99.75 % ຂອງງົບປະມານທັງໝົດ. ເຊິ່ງການຈັດຕັ້ງປະຕິບັດບາງໂຄງການໃນຮອບວຽນດັ່ງກ່າວແມ່ນມີ 1 ໂຄງການຄື ໂຄງການກໍ່ສ້າງຫໍພັກນັກສຶກສາ ຢູ່ແຂວງຫລວງນ້ຳທາ ເມືອງນາເລ ກຸ່ມສະເລື່ອງ ບ້ານດອນທົບ ນັ້ນແມ່ນຖືກຍົກເລີກເນື່ອງຈາກຖືກໂຄງການສ້າງເຂື່ອນໄຟຟ້າດັ່ງນັ້ນ ພວກເຮົາສາມາດສະຫລຸບໄດ້ວ່າ ສຳຫລັບຮອບວຽນ 9 ແມ່ນຈັດຕັ້ງປະຕິບັດສຳເລັດແລ້ວ 100%.

ໃນຮອບວຽນທີ 10 ທລຍ ໄດ້ໃຫ້ການສະໜັບສະໜູນທັງໝົດ 393 ໂຄງການ ແລະ ງົບປະມານທັງໝົດຈຳນວນ 79,119,001,522 ກີບ. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແມ່ນຄືກັບທີ່ໄດ້ລາຍງານໃນເດືອນຜ່ານມາ, ມີຈຳນວນ 392 ໂຄງການທີ່ໄດ້ສຳເລັດການກໍ່ສ້າງ ແລະ ງົບປະມານຈຳນວນ 78,057,591,242 ກີບ (99%) ແມ່ນໄດ້ຖືກໂອນສາລັບການຈັດຕັ້ງປະຕິບັດໂຄງການຍ່ອຍເຫລົ່ານັ້ນ. ສາລັບ 1 ໂຄງການທີ່ຍັງບໍ່ສຳເລັດນັ້ນມີຄວາມຄືບໜ້າໜ້ອຍກວ່າ 50% ຢູ່ແຂວງ ຫຼວງນ້ຳທາ ເມືອງນາແລ ກຸ່ມສະແກນ (ບ້ານສະແກນ) ເປັນໂຄງການກໍ່ສ້າງຂົວອູ່ ມີຄວາມລ່າຊ້າເນື່ອງຈາກວ່າໂຄງການດັ່ງກ່າວເປັນໂຄງການທົດລອງ ແລະ ເປັນໂຄງການຂະໜາດໃຫຍ່ອຸປະກອນສ່ວນໃຫຍ່ແມ່ນນຳມາຈາກຕ່າງປະເທດ ແລະ ກຳລັງຢູ່ໃນຂັ້ນຕອນເພື່ອກຳນົດມາດຕະຖານເຫລັກຄືນໃຫມ່ (ປະເທດຫວຽດນາມ), ເປັນທຶນສົມທົບລະຫວ່າງ ທລຍ ແລະ ພາກສ່ວນອື່ນ.

## 2. ງົບປະມານ ແລະ ການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2

ສຳລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ກໍລະກົດ 2015 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 60,963,457,903 ກີບ ເທົ່າກັບ 99.75 %, ຮອບວຽນ 10 ເບີກຈ່າຍໄປແລ້ວ 78,883,029,606 ກີບ ເທົ່າກັບ 99.70 % ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈຳນວນ

75,097,726,982 ກີບ ຫລື ເທົ່າກັບ 96.97 % ຂອງງົບປະມານທັງໝົດ (77,447,719,567 ກີບ) ແລະ ສໍາລັບຮອບວຽນ 12 ງົບປະມານທັງໝົດ 86,960,002,000 ກີບ ເບີກຈ່າຍໄປແລ້ວ 26,816,868,828 ກີບ ລາຍລະອຽດດັ່ງຕາຕະລາງ 4 ລຸ່ມນີ້.

**ຕາຕະລາງ 5. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2015)**

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 60,963,457,903 | 150,843,014 |
| ຮອບວຽນ 10 (2012-2013) | 393 | 79,119,001,522 | 392 | 78,883,029,606 | 235,971,916 |
| ຮອບວຽນ 11 (2013-2014) | 333 | 77,447,719,567 | 326 | 75,097,726,982 | 2,350,097,585 |
| ຮອບວຽນ 12 (2014-2015) | 438 | 86,960,002,000 | 229 | 26,816,868,828 | 60,143,133,172 ງົບປະມານອາດມີການ ປ່ຽນແປງເນື່ອງຈາກບາງ ໂຄງການຍັງຢູ່ໃນຂັ້ນ ຕອນການປະມູນ |
| ຮອບວຽນ 13 (ສົກປີ2015-2016) | 110 | ບ້ວງທຶນສົມທົບລັດຖະ ບານແມ່ນສໍາເລັດການສໍາ ຫຼວດ-ອອກແບບແລ້ວ | 0 | - | ໄດ້ແບ່ງເປັນ 2 ງວດຄື: ງວດທີ່ 1 ແຕ່ເດືອນ ມັງກອນ-ກັນຍາ, ງວດທີ່ 2 ແຕ່ເດືອນ ຕຸລາ-ທັນວາ 2016 ງວດລະ 16 ຕື້. |
| ລວມ | 1,536 | 304,641,024,006 | 1,208 | 241,761,083,319 | 62,880,045,687 |

*ແຫຼ່ງຂໍ້ມູນ: ພະແນກບໍລິຫານ - ການເງິນ, ທລຍ, 31 ກໍລະກົດ 2015*

## 3. ວຽກງານວິຊາສະເພາະ ແລະ ຕິດຕາມໂຄງການ

- **ວຽກງານພັດທະນາຊຸມຊົນ**

- ສໍາເລັດການຈັດຊຸດຝຶກອົບຮົມການປ້ອງກັນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ ຢູ່ພາກໃຕ້ ທີ່ ແຂວງ ສາລະວັນ ແລະ ແຂວງ ອັດຕະປື ລະຫວ່າງວັນທີ່ 7-17 ກໍລະກົດ 2015; ຢູ່ພາກເໜືອ ທີ່ແຂວງ ຊຽງຂວາງ ແລະ ແຂວງ ອຸດົມໄຊ ລະຫວ່າງວັນທີ 22-29 ກໍລະກົດ 2015 ເຊິ່ງພະນັກງານ ວິສະວະກໍາ ແລະ ພັດທະນາຊຸມຊົນ ຂັ້ນແຂວງ ແລະ ເມືອງ ຈາກ 10 ແຂວງເຂົ້າຮ່ວມ ລວມມີ 120 ທ່ານ/ຍິງ 5 ທ່ານ ແລະ ມີຊ່ຽວຊານດ້ານການປ້ອງກັນຜົນກະທົບດ້ານສັງຄົມ 1 ທ່ານ ແລະ ດ້ານປ້ອງກັນຜົນກະທົບດ້ານສິ່ງ ແວດລ້ອມ 1 ທ່ານ ຈາກທະນາຄານໂລກ, ການຝຶກອົບຮົມຄັ້ງນີ້ດ້ານສັງຄົມແມ່ນເນັ້ນໃສ່ກອບນະໂຍບາຍ ຊົນເຜົ່າ(EGPF) ແລະ ກອບນະໂຍບາຍການທົດແທນຄືນ ແລະ ຍົກຍ້າຍຖິ່ນຖານ (CRPF) ແລະ

ດ້ານສິ່ງແວດລ້ອມເນັ້ນໃສ່ຜົນກະທົບດ້ານສິ່ງແວດລ້ອມ ແລະ ການປົກປ້ອງທີ່ພົວພັນເຖິງໂຄງການຍ່ອຍ ຂອງ ທລຍ; ການຄຸ້ມຄອງສະພາບແວດລ້ອມ ແລະ ສັງຄົມ (ESMF)

- ຕິດຕາມ ແລະ ກວດກາການດຳເນີນກອງປະຊຸມປະຈຳເດືອນຜູ້ປະສານງານກຸ່ມບ້ານ ຊຶ່ງໄດ້ຈັດຂຶ້ນໃນເດືອນຜ່ານມາໄດ້ຈັດຂຶ້ນຢູ່ແຂວງ ເຊກອງ, ຫລວງນໍ້າທາ, ຫົວພັນ ແລະ ແຂວງ ອັດຕະປື. ກອງປະຊຸມດັ່ງກ່າວນີ້ ແມ່ນການສະຫລຸບລາຍງານ ແລະ ວາງແຜນວຽກໃນຕໍ່ໜ້າຂອງຜູ້ປະສານງານກຸ່ມ ແລະ ຝຶກຄືນໃນສິ່ງທີ່ຍັງບໍ່ເຂົ້າໃຈ ຫລື ສິ່ງທີ່ມີການປ່ຽນແປງກ່ຽວກັບ ລະບຽບ ນະໂຍບາຍ ແລະ ວິທີການຈັດຕັ້ງປະຕິບັດວຽກງານ ທລຍ.
- ຕິດຕາມຊຸກຍູ້ການຈັດກອງປະຊຸມປະສານງານປະຈຳເດືອນກັບຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ໃນແຕ່ລະເມືອງເປົ້າໝາຍຂອງ ທລຍ ແລະ ໄດ້ຈັດເປັນປົກກະຕິໃນແຕ່ລະເດືອນ ທັງນີ້ກໍ່ເພື່ອເພີ່ມຂອດການປະສານງານກັນລະຫວ່າງພະນັກງານ ທລຍ ແລະ ຂະແໜງການທີ່ກ່ຽວຂ້ອງກ່ຽວ ກັບການຊຸກຍູ້ວຽກງານພັດທະນາ ແລະ ຈັດຕັ້ງປະຕິບັດໂຄງການຍ່ອຍ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະອຳນາດການປົກຄອງທ້ອງຖິ່ນໃຫ້ດີຂຶ້ນເລື້ອຍໆ;
- ສຳເລັດຈັດຝຶກອົບຮົມຄະນະກວດສອບທາງສັງຄົມຂັ້ນບ້ານຢູ່ 5 ເມືອງທົດລອງ CDD ເລີ່ມແຕ່ວັນທີ 1 - 17 ກໍລະກົດ 2015, ແຕ່ລະເມືອງດຳເນີນການຝຶກອົບຮົມເປັນເວລາ 2 ວັນ ໂດຍເນັ້ນກ່ຽວກັບ ພາລະບົດບາດ ໜ້າທີ່ຮັບຜິດຊອບຂອງຄະນະກວດສອບ, ບົດຮຽນໃນໄລຍຜ່ານມາກ່ຽວກັບ ການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ວິທີການຕິດຕາມ ແລະ ກວດສອບ ລວມທັງວຽກງານ ກສກ.

  ການຝຶກອົບຮົມດັ່ງກ່າວແມ່ນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະກວດສອບທາງສັງຄົມຂັ້ນບ້ານກ່ຽວກັບວິທີການກວດສອບການຈັດຕັ້ງປະຕິບັດໂຄງການຍ່ອຍທີ່ຈະໄດ້ຮັບການຊ່ວຍ ເຫລືອຈາກ ທລຍ ແລະ ຮັບປະກັນໃຫ້ແກ່ໂຄງການຍ່ອຍທີ່ໄດ້ຮັບການຊ່ວຍເຫລືອຈາກ ທລຍ ມີຄຸນນະພາບ ແລະ ສາມາດນຳໃຊ້ໄດ້ຍາວນານ ແນໃສ່ເຮັດໃຫ້ການພັດທະນາມີຄວາມຍືນຍົງ, ຜູ້ເຂົ້າຮ່ວມ ຝຶກອົບຮົມ ຢູ່ 5 ເມືອງມີທັງໝົດ 139 ທ່ານ, ຍິງ 51 ທ່ານ.
- ໄດ້ມີການປັບປຸງ ແລະ ຂຽນຂ່າວ ເພື່ອເຜີຍແຜ່ຂໍ້ມູນ-ຂ່າວສານຜ່ານວິທະຍຸແຫ່ງຊາດ, ລາຍການພາກຂ່າວ, ລາຍການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ລາຍການລຸງສ້າງ-ລຸງສາ, ກົມຂ່າວສານແມ່ຍິງລາວ, ໜັງສືພິມຕ່າງໆ ແລະ ເວບໄຊ ທລຍ ເຊິ່ງປະກອບມີ 6 ຫົວຂໍ້ຂ່າວຄື:
  - ການລົງທົດລອງແບບສອບຖາມການເກັບກຳຂໍ້ມູນ ເພື່ອປະເມີນຜົນກະທົບຂອງ ທລຍ II.
  - ວຽກງານຕິດຕາມ-ປະເມີນຜົນໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ ຕໍ່ການປະເມີນຄວາມຍືນຍົງຂອງການຍ່ອຍ.
  - ທລຍ ແຂວງຊຽງຂວາງໄດ້ນຳພາທີມງານຂັ້ນບ້ານໄປຖອດຖອນບົດຮຽນຢູ່ແຂວງ ຫົວພັນ.
  - ການປູກເຫັດສ້າງລາຍຮັບເປັນກອບເປັນກຳໃຫ້ແກ່ຄອບຄົວ.
  - ທລຍ ໃຫ້ຄວາມສຳຄັນຕໍ່ການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ.
  - ທລຍ ສະໜັບສະໜູນ ການກໍ່ສ້າງຊົນລະປະທານ ບ້ານຫ້ວຍຄະ.

- ສຳເລັດວາງສະແດງຮູບພາບ ແລະ ເຄື່ອງມື IEC ຢູ່ກອງປະຊຸມສະພາບໍລິຫານ ອາຊ່ຽນ-ຈີນ ທີ່ຈັດຂຶ້ນໃນວັນທີ 28-29 ກໍລະກົດ ຮ່ວມກັບ ຄພທສ ພ້ອມທັງ ອອກແບບຄູ່ມືຈັດຕັ້ງປະຕິບັດກອງປະຊຸມ Asian-China ໃຫ້ຄະນະພັດທະນາຊຸມນະບົດເພື່ອແຈກຢາຍໃນກອງປະຊຸມອາຊຽນບວກຈີນກ່ຽວກັບວຽກງານພັດທະນາຊຸມນະບົດ
- ສຳເລັດການຖ່າຍທຳເພີ່ມເຕີມສາລະຄະດີ ວຽກງານປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການຮ່ວມກັບໂທລະພາບແຫ່ງຊາດ.

- <u>ວຽກງານວິສະວະກຳ ແລະ ວິຊາການ</u>

- ຕິດຕາມ ຕາຕະລາງສັງລວມໂຄງການຍ່ອຍຂອງເມືອງ ສຳລັບແຂວງທີ່ມີງົບປະມານເຫລືອ ພ້ອມທັງສຳເລັດການລົງກວດກາເອກະສານປົກປ້ອງຜົນກະທົບຕໍ່ສິ່ງແວດລ້ອມຂອງໂຄງການຍ່ອຍ.
- ກະກຽມແຜນການເອົານັກສຶກສາລົງກວດກາຄຸນນະພາບການກໍ່ສ້າງໂຄງການຍ່ອຍໃນແຕ່ລະແຂວງເພື່ອຮັບປະກັນຄຸນນະພາບການກໍ່ສ້າງ ແລະ ຄວາມຍືນຍົງຂອງໂຄງການ.
- ສືບຕໍ່ລົງຕິດຕາມໂຄງການຍ່ອຍ ຮອບວຽນທີ 11 ແລະ 12 ພ້ອມທັງກະກຽມການເຮັດວຽກຮ່ວມກັບ ILO ແລະ ຕິດຕາມການກໍ່ສ້າງຫ້ອງນໍ້າ, ເພດານໂຮງຮຽນທີ່ນຳໃຊ້ທຶນຂອງອົງການພັດທະນາຈາກປະເທດສະວິດເຊີແລນ (SDC).
- ສືບຕໍ່ກະກຽມຫລັກສູດຝຶກອົບຮົມ ຕາມຮູບແບບການຈັດຕັ້ງປະຕິບັດໂດຍຊຸມຊົນເຕັມຮູບແບບ (CDD) ລວມທັງກະກຽມການຮ່ວມມືກັບອົງການນໍ້າ ແລະ ສຸຂະອະນາໄມ ນໍ້າສະອາດ.

- <u>ວຽກງານຕິດຕາມ-ປະເມີນຜົນ</u>

- ຫຼັງຈາກທີ່ໄດ້ສຳເລັດການຝຶກອົບຮົມກ່ຽວກັບການການນຳໃຊ້ຂໍ້ມູນ ແລະ ປ້ອນຂໍ້ມູນຂອງການປະເມີນຄວາມຍືນຍົງຂອງໂຄງການຍ່ອຍ ແລະ ການນຳໃຊ້ເຄື່ອງມື ກສກ, ພະນັກງານແຂວງກຳລັງກະກຽມການລົງເກັບກຳຂໍ້ມູນ ແລະ ຈຳນວນໜຶ່ງໄດ້ເລີ່ມລົງລົງເກັບກຳຂໍ້ມູນແລ້ວ, ວຽກງານການປະເມີນເຫຼົ່ານີ້ແມ່ນມີຄວາມສຳຄັນ ໂດຍເປັນຕົວຊີ້ວັດຄວາມສຳເລັດຂອງໂຄງການ, ແຜນວຽກຕໍ່ໄປແມ່ນໃຫ້ພະນັກງານແຂວງ, ເມືອງ ແລະ ກຸ່ມບ້ານສືບຕໍ່ເກັບກຳຂໍ້ມູນ ແລະ ຂຽນບົດລາຍງານ.
- ນອກຈາກນີ້ຍັງໄດ້ມີການຮ່ວມເຮັດວຽກກັບທີມງານປະເມີນພາຍນອກໂດຍທີມງານຕິດຕາມ-ປະເມີນຜົນສູນກາງ ຮ່ວມກັບຊ່ຽວຊານຂອງທະນາຄານໂລກ ແລະ ທີມງານບໍລິສັດ Indochina Research (Laos) Co., Ltd ໄດ້ທົດລອງແບບສອບຖາມການເກັບກຳຂໍ້ມູນ ກ່ຽວກັບຜົນກະທົບຂອງ ທລຍ II ຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນ ທີ່ບ້ານຖໍ້າ, ເມືອງນາຊາຍທອງ, ນະຄອນຫລວງວຽງຈັນ ໃນວັນທີ 14 ກໍລະກົດ 2015. ຈຸດປະສົງຂອງວຽກງານນີ້ແມ່ນເພື່ອທົບທວນຄືນແບບສອບຖາມ ບໍ່ວ່າຈະແມ່ນຄຳສັບທີ່ໃຊ້ໃນແບບສອບຖາມ, ລຳດັບຂອງຄຳຖາມ, ຄວາມເຂົ້າໃຈຂອງທັງຜູ້ຖາມ ແລະ ຜູ້ຖືກຖາມ ເພື່ອເຮັດໃຫ້ແບບສອບຖາມມີຄວາມສອດຄ່ອງ, ເໝາະສົມ ແລະ ໄດ້ຮັບຜົນຕາມຄາດໝາຍທີ່ສຸດ. ຫຼັງຈາກການ

ສຳເລັດການທົດສອບດັ່ງກ່າວ, ທີມງານຍັງໄດ້ສືບຕໍ່ຮ່ວມເຮັດວຽກໃນການສະໜອງຂໍ້ມູນເພີ່ມເຕີມ, ດັດແກ້ແບບສອບຖາມ ແລະ ເຂົ້າຮ່ວມການຝຶກອົບຮົມກ່ຽວກັບວິທີການເກັບຂໍ້ມູນ ເພື່ອຮັບປະກັນຄຸນນະພາບຂອງການປະເມີນກ່ອນລົງເກັບກຳຂໍ້ມູນຕົວຈິງ.

- ເພື່ອຮັບປະກັນຄຸນນະພາບຂອງຂໍ້ມູນໃນລະບົບຖານຂໍ້ມູນ, ໃນລະຫວ່າງວັນທີ 20-28 ກໍລະກົດ ຜູ້ຮັບຜິດຊອບ ຄຸ້ມຄອງລະບົບຖານຂໍ້ມູນຈາກສູນກາງ ຍັງໄດ້ເດີນທາງໄປຊີ້ນຳ ແລະ ເຮັດວຽກຮ່ວມກັບພະນັກງານຕິດຕາມ-ປະເມີນຜົນແຂວງ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານແຂວງກ່ຽວກັບວຽກງານຄຸ້ມຄອງລະບົບຖານຂໍ້ມູນ. ສຳລັບຄວາມຄືບໜ້າຂອງແຜນການປັບປຸງລະບົບຖານຂໍ້ມູນ, ນະປະຈຸບັນກຳລັງຢູ່ໃນຂັ້ນຕອນລໍຖ້າການອອກສັນຍາ. ໃນການປັບປຸງລະບົບຖານຂໍ້ມູນໃນເບື້ອງຕົ້ນ ຄາດວ່າຈະໄດ້ປັບປຸງຕາມລາຍການດັ່ງນີ້: ປັບປຸງລະບົບການປ້ອນ ແລະ ດຶງຂໍ້ມູນ ຂອງໂຄງການ LONG ມານຳໃຊ້, ຂໍ້ມູນເພດານກຸ່ມບ້ານ, ຂໍ້ມູນງົບປະມານໂຄງການ, ຂໍ້ມູນໂຄງການເພີ່ມຈຳນວນ 40 ໂຄງການ ແລະ ການປ້ອນຂໍ້ມູນໃນຮູບແບບ online/offline.

- <u>ວຽກງານບໍລິຫານ - ການເງິນ</u>

- ສືບຕໍ່ສ້າງ ແລະ ປັບປຸງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງພະນັກງານ ທີ່ຮັບຜິດຊອບກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ ຕຳແໜ່ງດັ່ງຕໍ່ໄປນີ້:
    1. ຫົວໜ້າຮັບຜິດຊອບວຽກປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ.
    2. ປະສານງານດ້ານກິດຈະກຳປັບປຸງຊີວິດການເປັນຢູ່.
    3. ຜູ້ຊ່ວຍກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ.
    4. ປະສານງານຂັ້ນເມືອງ ສຳລັບເມືອງທີ່ມີກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ.
    5. ວິຊາການຂັ້ນເມືອງດ້ານປັບປຸງຊີວິດການເປັນຢູ່.
    6. ວິຊາການຂັ້ນເມືອງດ້ານໂພຊະນາການ.
    7. ປະສານງານຂັ້ນບ້ານດ້ານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ.
    8. ອາສາສະໝັກຂັ້ນເມືອງດ້ານວຽກງານຕິດຕາມ ແລະ ກວດກາ

    ມາຮອດປະຈຸບັນ ການປະຕິບັດວຽກດັ່ງກ່າວແມ່ນໄດ້ 50 ຫ້າສິບສ່ວນຮ້ອຍ ເພາະວ່າ ບາງຕຳແໜ່ງຍັງບໍ່ໄດ້ສິ່ງຂໍອະນຸມັດຈາກທະນາຄານໂລກ ແລະ ການດຳເນີນຂະບວນການຄັດເລືອກພະນັກງານຕຳແໜ່ງຂ້າງເທິງ (ໃນກໍລະນີທີ່ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບໄດ້ຖືກກຳນົດ ແລະ ອະນຸມັດ): ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກວ່າ ຍັງບໍ່ທັນໄດ້ສິ່ງຫາຜູ້ໃຫ້ທຶນ ແລະ ໄດ້ຮັບການອະນຸມັດເທື່ອ.

- ໄດ້ສຳເລັດການຄັດເລືອກພະນັກງານຂັບລົດຂັ້ນສູນກາງ, ຜູ້ທີ່ໄດ້ຮັບການຄັດເລືອກຈະເລີ້ມປະຈຳການ ໃນວັນທີ 01 ສິງຫາ 2015
- ໄດ້ເຂົ້າຮ່ວມຮັບໃຊ້ກອງປະຊຸມ The 9th ASEAN-China Forum on Social Development and Poverty Reduction "Financial Innovations for Poverty Reduction"

- ສຳເລັດການປະເມີນພະນັກງານຮັບຜິດຊອບກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການຢູ່ທຸກໆ ຂັ້ນ ແລະ ສຳເລັດການປະເມີນ ແລະ ສັງລວມການຍ້ອງຍໍຜົນງານ 10 ປີ ຂອງພະນັກງານ ພ້ອມທັງສຳເລັດການເກັບກຳສະຖິຕິພະນັກງານ ທລຍ ຂັ້ນສູນກາງ ປະຈຳປີ 2015.

- **ວຽກປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ (LN)**

ໂດຍສົມທົບກັບພະແນກ ບໍລິຫານການເງິນ ສຳເລັດການເຮັດແຈ້ງການໃຫ້ແຕ່ລະເມືອງ ນຳໃຊ້ເງິນທີ່ເຫຼືອຢູ່ໃນບັນຊີຂັ້ນແຂວງ ເພື່ອເປັນງົບປະມານໃນການເຄື່ອນໄຫວຽກປະຈຳໄຕມາດດັ່ງລຸ່ມນີ້:

| ລ/ດ | ລາຍການ | ງົບປະມານໄຕມາດແຕ່ລະເມືອງ (ກີບ) | | | | ລວມທັງໝົດ |
|---|---|---|---|---|---|---|
| | | ເມືອງ ຮ້ຽມ | ເມືອງຊ່ອນ | ເມືອງ ເຊໂປນ | ເມືອງ ນອງ | |
| 1 | ງົບປະມານການເຄື່ອນໄຫວວຽກ ໃນໄລຍະ 4 ເດືອນ(5-8/2015) | 100,477,000 | 105,388,000 | 123,170,000 | 102,551,000 | 431,586,000 |

ຂໍ້ມູນຈາກ: ໂຄງການປັບປຸງຊີວິດການເປັນຢູ່ເພື່ອຄ້ຳປະກັນດ້ານໂພຊະນາການ 31 ກໍລະກົດ 2015

- ເຮັດການປະເມີນພາກວິຊາການ ຮ່ວມກັບຜູ້ໃຫ້ທຶນທີ່ເມືອງຊ່ອນ ແລະ ເມືອງຮ້ຽມ ແຂວງ ຫົວພັນ, ໂດຍລວມແລ້ວຄະນະຜູ້ໃຫ້ທຶນ ມີຄວາມເພິ່ງພໍໃຈເປັນຢ່າງດີ ຕໍ່ວຽກຈັດຕັ້ງປະຕິບັດ ແລະ ຜົນໄດ້ຮັບຈາກແຕ່ລະໜ້າວຽກ, ແຕ່ກໍ່ຮຽກຮ້ອງໃຫ້ເອົາໃຈໃສ່ຕື່ມເພື່ອຜົນສະເລັດໃນໄລຍະຍາວ ໂດຍສະເພາະແມ່ນໃຫ້ຍົກລະດັບ ວຽກງານການເກັບກຳຂໍ້ມູນ ແລະ ການລາຍງານ ໃຫ້ມີຄວາມຕໍ່ເນື່ອງ ແລະ ສັດແຈນ ເພາະເປັນໝາກຫົວໃນສຳຄັນທີ່ຈະ ຊີ້ວັດຜົນສະເລັດຂອງ ໂຄງການ.
- ກອງປະຊຸມປຶກສາຫາລື ຖອດຖອນບົດຮຽນ ການຈັດຕັ້ງປະຕິບັດ ວຽກປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ (ປຊຢ) ທີ່ຫ້ອງການ ທລຍ: ດ້ານພະນັກງານຂັ້ນກຸ່ມບ້ານ, ຂັ້ນເມືອງ ແລະ ຂັ້ນສູນກາງ, ມອບໃຫ້ຜູ້ຊີ້ນຳວຽກງານ ປຊຢ ປັບປຸງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງພະນັກງານແຕ່ລະຂັ້ນຄືນໃໝ່ ເພື່ອໃຫ້ແທດເໝາະກັບໜ້າວຽກຕົວຈິງ ແລະ ທົບທວນຄືນ 23 ຂັ້ນຕອນ ການຈັດຕັ້ງປະຕິບັດກິດຈະກຳ ປຊຢ ເຫຼືອພຽງ 18 ຂັ້ນຕອນ, ແຜນການຂະຫຍາຍໃໝ່ 4 ເມືອງອາດຂະຫຍາຍ ຢູ່ຫົວພັນ 3 ເມືອງ ແລະ ສະຫວັນນະເຂດ 1 ເມືອງ.
- ວຽກງານເກັບກຳຂໍ້ມູນ ແລະ ຕິດຕາມປະເມີນຜົນ: ໄດ້ເປີດກອງປະຊຸມປຶກສາຫາລືລະຫວ່າງ ຜູ້ຮັບຜິດຊອບວຽກງານເກັບກຳຂໍ້ມູນ ແລະ ຕິດຕາມປະເມີນຜົນ ປຊຢ ໂດຍການສະໜັບສະໜູນ ຂອງພະແນກຕິດຕາມປະເມີນຜົນ ແລະ ທີ່ປຶກສາອາວຸໂສ ຫ້ອງການ ທລຍ ກັບຜູ້ຊີ້ນຳວຽກງານ ທລຍ ຈາກຫ້ອງການທະນາຄານໂລກ, ທ່ານທີ່ປຶກສາດ້ານວຽກງານເກັບກຳຂໍ້ມູນ ແລະ ຕິດຕາມປະເມີນຜົນ ຈາກທະນາຄານໂລກ ກອງປະຊຸມໄດ້ທົບທວນ ບັນດາຕົວຊີ້ວັດ (ທັງດ້ານວຽກງານ ປັບປຸງຊີວິດການເປັນຢູ່ ແລະ ວຽກງານໂພສະນາການ) ທີ່ຮຽບຮຽງໃໝ່ ໂດຍທີ່ປຶກສາ ປຊຢ. ພາຍຫຼັງກອງປະຊຸມ ທ່ານທີ່ປຶກສາ

ດ້ານວຽກງານ ວຽກງານເກັບກຳຂໍ້ມູນ ແລະ ຕິດຕາມປະເມີນຜົນ ຈາກທະນາຄານໂລກ ໄດ້ໃຫ້ຄຳໝັ້ນວ່າຈະ ຮຽບຮຽງຄືນໃໝ່ ພ້ອມທັງຜະລິດ ແບບຟອມການເກັບກຳຂໍ້ມູນ ພາກສະໜາມໃຫ້ພ້ອມ ເຊິ່ງຈະເປັນບ່ອນອີງໃນການເຮັດການປັບປຸງຖານຂໍ້ມູນໃນຕໍ່ໜ້ານີ້.

<u>ວຽກດ້ານໂພຊະນາການ</u>

- ໄດ້ຝຶກອົບຮົມ ການຄຸ້ມຄອງ ບໍລິຫານສູນໂພຊະນາການ,ການປຸງແຕ່ງອາຫານແບບຫຼາກຫຼາຍ ແລະວິທີການໃຫ້ຄວາມຮູ້ດ້ານໂພຊະນາການໃຫ້ພະນັກງານ ຄປພ ເມືອງ ຣ້ຽມ ແລະ ເມືອງ ຊ່ອນ ແຂວງຫົວພັນ ມີຜູ້ເຂົ້າຮ່ວມທັງໝົດ 20 ຄົນ ຍິງ 09 ຄົນ ( ເມືອງ ຣ້ຽມ 09 ຄົນ ຍິງ 04 ຄົນ ແລະ ເມືອງຊ່ອນ 11 ຄົນ ຍິງ05 ຄົນ ) ແລະ ແຈກຢາຍສື່ສຸຂະສຶກສາໃຫ້ແກ່ກຸ່ມເປົ້າໝາຍ.
- ເຄື່ອງມື ແລະ ສື່ສຸຂະສຶກສາ ໂຄງການ ຈຳນວນ 17 ( ພາກ ສຸຂະພາບ ແລະ ໂພຊະນາການ 08 ລາຍການ: ແຜ່ນໂຄສະນາລ້ຽງລູກດ້ວຍນົມແມ່, ປື້ມຕິດຕາມການເຕີບໂຕຂອງເດັກນ້ອຍ, ປື້ມເສັ້ນສະແດງການເຕີບໂຕຂອງເດັກຍິງ 0-5 ປີ, ປື້ມເສັ້ນສະແດງການເຕີບໂຕຂອງເດັກຊາຍ 0-5 ປີ, ແຜ່ນພິກອາຫານປະເພດເມັດແຫ້ງເປືອກແຂງທີ່ມີປະໂຫຍດ ແລະ ຄວນຫາໄວ້ ແລະ ການປຸງແຕ່ງເປັນອາຫານ, ແຜ່ນພິກອາຫານຈາກແຫຼ່ງທຳມະຊາດທີ່ມີຄຸນຄ່າ ແລະ ການປຸງແຕ່ງເປັນອາຫານ, ແຜ່ນພັບສວນຄົວ, ແຜ່ນພິກ ພາກທີ 9, 11, 12) ລາຍການ ໄດ້ຖືກແຈກຢາຍ ແລະ ຝຶກ ແນະນຳວິທີການນຳໃຊ້ໃຫ້ແຕ່ລະເມືອງເປົ້າໝາຍ.
- ໄດ້ເຂົ້າຮ່ວມ ແລະ ຕິດຕາມຄະນະຊ່ຽວຊານຜູ້ໃຫ້ທຶນທະນາຄານໂລກລົງຢ້ຽມຢາມໂຄງການພາກສະໜາມ ເມືອງຣ້ຽມ ແລະ ເມືອງ ຊ່ອນ ແຂວງ ຫົວພັນ ແຕ່ວັນທີ 22-23 ກໍລະກົດ 2015 ຜົນການລົງຢ້ຽມໂຄງການພາກສະໜາມຂອງຊ່ຽວຊານຜູ້ໃຫ້ທຶນ ໂດຍລວມແລ້ວ ເພິ່ນໄດ້ຍ້ອງຍໍຊົມເຊີຍ ແລະດີໃຈນຳການຈັດຕັ້ງປະຕິບັດກິດຈະກຳຢູ່ເມືອງຣ້ຽມ ແລະ ເມືອງຊ່ອນ ແຂວງຫົວພັນ ແຕ່ຍັງມີສິ່ງທີ່ຕ້ອງໄດ້ປັບປຸງແກ້ໄຂ ກໍ່ຄື ການບັນທຶກ ສະຫຼຸບ ລາຍງານຂໍ້ມູນການຈັດຕັ້ງປະຕິບັດກິດຈະກຳໂຄງການການປະຕິບັດກິດຈະກຳໄດ້ດີ ແຕ່ການລາຍງານຂໍ້ມູນພັດບໍ່ໄດ້ດີ ໂດຍສະເພາະແມ່ນ ເມືອງຣ້ຽມ ຈະຕ້ອງໄດ້ຖອດຖອນບົດຮຽນນຳເມືອງຊ່ອນທີ່ບັນທຶກ ສະຫຼຸບ ລາຍງານຂໍ້ມູນໄດ້ດີກວ່າ.

4. <u>ແຜນວຽກສຳລັບເດືອນ ສິງຫາ 2015</u>

- <u>ວຽກງານພັດທະນາຊຸມຊົນ</u>

- ຊຸກຍູ້ໃຫ້ແຕ່ລະແຂວງຂຶ້ນແຜນງົບປະມານ ສຳລັບການທົບທວນແຜນ ຮອບວຽນ 13 ແລະ ຝຶກອົບຮົມວຽກງານການເງິນໃຫ້ແກ່ ກຸ່ມຊ່ວຍເຫລືອເຊິ່ງກັນແລະກັນຢູ່ເມືອງນອງ ແຂວງ ສະຫວັນນະເຂດ.
- ກະກຽມເອກະສານແນະນຳ CDD ທີ່ຈະເປີດຢູ່ເມືອງໃຫມ່ ເຊັ່ນ: ລອງ, ວຽງພູຄາ, ແບງ, ວຽງຄຳ, ຣ້ຽມ, ຊ່ອນ, ຊຽງຄໍ້, ເຊໂປນ, ທ່າປາງທອງ ແລະ ຕຸ້ມລານ ແລະ ປະສານງານກັບ ພະແນກ TA ໃນກອງປະຊຸມ

ແນະນຳກ່ອນການຈັດຕັ້ງປະຕິບັດໂຄງການຍ່ອຍເພື່ອຊຸກຍູ້ໃຫ້ຊຸມຊົນ ເຮັດວັງສະຫງວນ ຫລື ບູລະນະວັງສະຫງວນທີ່ມີໃນບ້ານຄືນໃຫມ່.

- ຕິດຕາມ ແລະ ກວດກາການດຳເນີນກອງປະຊຸມປະສານງານປະຈຳເດືອນກັບຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ປະຈຳຮອບວຽນ 12 ໃນແຕ່ລະເມືອງເປົ້າໝາຍ ທລຍ.
- ປະສານງານກັບ ທີມງານພະແນກຕິດຕາມ ແລະ ປະເມີນຜົນ ເພື່ອສະຫລຸບ ສັງລວມ ຜົນການວິເຄາະຂໍ້ມູນທີ່ຕິດພັນກັບ GESI ອີງຕາມໂຕຊີ້ວັດທີ່ກຳນົດໄວ້ໃນເບື້ອງຕົ້ນ ທັງນີ້ກໍ່ເພື່ອ ກະກຽມການຕິດຕາມ ແລະ ຈັດຕັ້ງປະຕິບັດວຽກງານ ທລຍ ທີ່ຕິດພັນກັບວຽກງານສົ່ງເສີມ GESI ໃນຮອບວຽນ 13 ທີ່ຈະມາເຖິງ.
- ຂຽນຂ່າວ ແລະ ດັດແກ້ຂ່າວທີ່ມາແຕ່ 10 ແຂວງເປົ້າໝາຍ ສົ່ງໃຫ້ວິທະຍຸແຫ່ງຊາດ, ລາຍການພາກຂ່າວ, ລາຍການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ລາຍການລຸງສ້າງ-ລຸງສາ, ກົມຂ່າວສານແມ່ຍິງລາວ, ໜັງສືພິມຕ່າງໆ ແລະ ລົງເວບໄຊ ທລຍ ໃຫ້ໄດ້ 5 ບົດ.
- ຈັດສຳພາດ ລາຍການຮອບບ້ານຜ່ານເມືອງ ກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ແຜນການໃນຕໍ່ໜ້າ ໂດຍສະເພາະ ແມ່ນການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງຢູ່ 3 ແຂວງທີ່ກຳລັງດຳເນີນການທົດລອງຢູ່.

- <u>ວຽກງານວິສະວະກຳ</u>

- ລໍຖ້າຄຳຕອບຈາກຂັ້ນເທິງກ່ຽວກັບການປະດັບປະດາລົດແຫ່ຂະບວນສະເຫລີມສະຫລອງວັນຊາດທີ 2
- ສືບຕໍ່ກະກຽມແຜນລົງກວດກາໂຄງການຍ່ອຍ GOL ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທສ ແລະ ກະຊວງແຜນການ ແລະ ສືບຕໍ່ລົງຕິດຕາມໂຄງການຍ່ອຍ ຮອບວຽນທີ 11, 12.
- ສືບຕໍ່ສັງລວມບັນຫາກ່ຽວກັບການຄວບຄຸມຄຸນນະພາບຂອງການກໍ່ສ້າງຮອບວຽນທີ 11 ແລະ ສືບຕໍ່ກວດຄືນ ແລະ ປັບປຸງແບບແຕ້ມກໍ່ສ້າງປະເພດອາຄານ ສຳລັບນຳໃຊ້ຮອບວຽນທີ 13.
- ສືບຕໍ່ກະກຽມຫລັກສູດຝຶກການຝຶກອົບຮົມ Water CAD ໃຫ້ວິຊາການຂັ້ນເມືອງ.
- ສືບຕໍ່ກະກຽມຫລັກສູດຝຶກອົບຮົມ Grasp & Gear ໃຫ້ວິຊາການຂັ້ນເມືອງທີ່ເຂົ້າມາໃໝ່.
- ເປີດກອງປະຊຸມໃຫຍ່ຢູ່ 4 ແຂວງພາກໃຕ້ (ແຂວງສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື) ກ່ຽວກັບການຈັດຕັ້ງປະຕິບັດໂຄງການທົດລອງ ການກໍ່ສ້າງວິດຖ່າຍ ໂດຍຮ່ວມມືກັບອົງການນ້ຳສະອາດ WSP.

- <u>ວຽກງານຕິດຕາມປະເມີນຜົນ</u>

- ສືບຕໍ່ຕິດຕາມຄວາມຄືບໜ້າຂອງການປັບປຸງລະບົບຖານຂໍ້ມູນຂອງ ທລຍ ທີ່ຈະໄດ້ເອົາຂໍ້ມູນວຽກຂອງ ໜ່ວຍງານ LN (ປັບປຸງຊີວິດການເປັນຢູ່ ແລະ ໂພສະນາການ) ເຂົ້ານຳ.

- ເພື່ອຮັບປະກັນປະສິດຕິພາບທາງດ້ານຂໍ້ມູນ ພະແນກຕິດຕາມ-ປະເມີນຜົນ ໄດ້ກະກຽມການຈັດກອງປະຊຸມປະຈໍາປີ 2015 ເຊິ່ງຄາດວ່າຈະໄດ້ຈັດຂຶ້ນໃນຕົ້ນເດືອນ ກັນຍາ 2015 ທັ້ງນີ້ກໍ່ເພື່ອສ້າງຄວາມເຂັ້ມແຂງ ແລະ ເພື່ອທົບທວນ ວຽກງານຕິດຕາມ-ປະເມີນຜົນຕະຫຼອດໄລຍະໜຶ່ງປີຜ່ານມາ ແລະ ວາງແຜນວຽກໃນໄລຍະຕໍ່ໄປ ກອງປະຊຸມກໍຍັງຈະໄດ້ເຊີນຕາງໜ້າຈາກອົງການຈັດຕັ້ງຕ່າງໆ ຈາກທົ່ວປະເທດເພື່ອມາແລກປ່ຽນບົດຮຽນກ່ຽວກັບວຽກງານຕິດຕາມ-ປະເມີນຜົນໃນ ສປປ.ລາວ.
- ສືບຕໍ່ເຮັດການປະເມີນຄວາມຍືນຍົງຂອງການນໍາໄຊ້ໂຄງການທັງໝົດທີ່ ທລຍ ໄດ້ໃຫ້ຄວາມຊ່ວຍເຫລືອນັບແຕ່ຮອບວຽນ 9-11 ໄປຄຽງຄູ່ກັບສຶກສາຄວາມພຶງພໍໃຈຂອງຊຸມຊົນ ແລະ ປະເມີນກ່ຽວກັບຄວາມເຂົ້າໃຈຂອງຊຸມຊົນກ່ຽວກັບການນໍາໄຊ້ເຄື່ອງມື ສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ.

- <u>ວຽກງານບໍລິຫານ-ການເງິນ</u>

- ສືບຕໍ່ປັບປຸງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງພະນັກງານ ທີ່ຮັບຜິດຊອບກິດຈະກໍາປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ.
- ປັບປຸງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຕໍາແໜ່ງຜູ້ຊ່ວຍບັນຊີ ແລະ ກວດສອບພາຍໃນດ້ານວຽກງານວິສະວະກໍາ ຂັ້ນສູນກາງ.
- ດໍາເນີນຂະບວນການຄັດເລືອກພະນັກງານຕໍາແໜ່ງຂ້າງເທິງ (ໃນກໍລະນີທີ່ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບໄດ້ຖືກກໍານົດ ແລະ ອະນຸມັດ).

- <u>ວຽກປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ (LN)</u>

- ທົບທວຍພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງພະນັກງານຄືນໃໝ່.
- ຈັດກອງປະຊຸມຖອດຖອນບົດຮຽນ ການຈັດຕັ້ງປະຕິບັດ ວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພສະນາການເພື່ອກະກຽມເຂົ້າສູ່ໄລຍະສືບຕໍ່ທຶນໃໝ່.
- ສົມທົບກັບພະແນກຕິດຕາມປະເມີນຜົນ ປັບປຸງລະບົບຖານຂໍ້ມູນ: ຕິດຕາມການຮຽບຮຽງຄືນ ບັນດາຕົວຊີ້ວັດນໍາ ທີ່ປຶກສາດ້ານການຕິດຕາມປະເມີນຜົນ ແລະ ຕິດຕາມການນໍາໃຊ້ທຶນທີ່ຍັງເຫຼືອຂອງແຕ່ລະເມືອງພ້ອມທັງປັນງົບປະມານໄຕມາດໃຫ້ແຕ່ລະເມືອງ

<u>ວຽກໂພຊະນາການ</u>

- ເຂົ້າຮ່ວມ ແລະ ຕິດຕາມຊ່ຽວຊານທະນາຄານໂລກ ລົງຢ້ຽມຢາມຕິດຕາມພາກສະໜາມ ທີ່ແຂວງ ຫົວພັນ ໃນລະຫວ່າງ ວັນທີ 09 -13 ສິງຫາ 2015.
- ຝຶກອົບຮົມ ການຄຸ້ມຄອງ ບໍລິຫານສູນໂພຊະນາການ,ການປຸ່ງແຕ່ງອາຫານແບບຫຼາກຫຼາຍ ແລະ ວິທີໃຫ້ຄວາມຮູ້ດ້ານໂພຊະນາການໃຫ້ພະນັກງານ ແຂວງ ສະຫວັນນະເຂດ.

| ຜູ້ອຳນວຍການບໍລິຫານ ທລຍ | ຫົວໜ້າພະແນກຕິດຕາມປະເມີນຜົນ | ສັງລວມ ແລະ ລາຍງານ |
|---|---|---|
| ------------------------- | ------------------------ | -------------------- |
| ບຸນກວ້າງ ສຸວັນນະພັນ<br>Bounkhouang SOUVANNAPHANH | ທັດທະຈັນ ພິມພັນທະວົງ | ມະນີວັນ ອິນທະປັນຍາ |